## ມິຊຊາອາທິດທີ 27 ກຳນົດທຳມະດາ
## ວັນທີ 2 ຕຸລາ 2022



**ພຣະວໍລະສານໂດຍນັກບຸນລູກາ 17, 5-10**

ໃນເວລານັ້ນ, ພວກອັກຄະສາວົກທູນພຣະເຢຊູເຈົ້າວ່າ: "ໂຜດໃຫ້ພວກຂ້ານ້ອຍມີຄວາມເຊື່ອທະວີຂຶ້ນເຖີດ". ພຣະອົງກ່າວຕອບວ່າ: "ຖ້າພວກເຈົ້າມີຄວາມເຊື່ອທໍ່ເມັດງາແລ້ວພວກເຈົ້າກໍອາດສັ່ງກັບກົກໄມ້ໃຫຍ່ນີ້ໄດ້ວ່າ: ຈົ່ງຖອນຮາກໄປປັ່ງຢູ່ກາງທະເລພຸ້ນ ມັນກໍຈະຟັງຄວາມພວກເຈົ້າ".

ມີໃຜໃນພວກເຈົ້າທີ່ມີຄົນໃຊ້ຜູ້ໜຶ່ງກຳລັງໄຖນາຫລືລ້ຽງສັດຢູ່. ເມື່ອເຫັນຄົນໃຊ້ນັ້ນຫລົບມາແຕ່ນາແລ້ວ ຈະບອກເຂົາວ່າ: "ໄວໆ, ມາກິນເຂົ້າ". ບໍ່ມີໃຜເວົ້າດັ່ງນີ້ດອກ, ແຕ່ຈະບອກຄົນໃຊ້ນັ້ນວ່າ: "ຈົ່ງຈັດຫາອາຫານມາໃຫ້ເຮົາ. ຈົ່ງມັດແອວຮັບໃຊ້ເຮົາຕະຫລອດເວລາທີ່ເຮົາກິນແລະດື່ມ. ເມື່ອເສັດແລ້ວເຈົ້າຈຶ່ງກິນແລະດື່ມຕາມຫລັງ".

ດັ່ງນີ້ຜູ້ເປັນນາຍຈະສຳແດງຄວາມຮູ້ບຸນຄຸນຕໍ່ຄົນໃຊ້ທີ່ໄດ້ປະຕິບັດຕາມຄຳສັ່ງຂອງຕົນບໍ? ບໍ່ແມ່ນດັ່ງນີ້ດອກ.

ສຳລັບພວກເຈົ້າກໍດັ່ງດຽວກັນ, ເມື່ອພວກເຈົ້າໄດ້ທຳທຸກຢ່າງຕາມຄຳສັ່ງແລ້ວ, ກໍໃຫ້ເວົ້າວ່າ: "ພວກເຮົາເປັນແຕ່ຄົນໃຊ້ຜູ້ບໍ່ມີປະໂຫຍດ, ຍ້ອນວ່າພວກເຮົາທຳຕາມໜ້າທີ່ຂອງຕົນເທົ່ານັ້ນ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າວັນນີ້ນຳສະເໜີສອງເລື່ອງຊຶ່ງຜູ້ຂຽນພຣະວໍລະສານໄດ້ເລົ່າຕໍ່ເນື່ອງກັນໃຫ້ພວກເຮົາຟັງ. ເລື່ອງທີໜຶ່ງແມ່ນການສົນທະນາລະຫວ່າງພວກສາວົກກັບພຣະເຢຊູເຈົ້າກ່ຽວກັບຄວາມເຊື່ອ. ສ່ວນເລື່ອງທີສອງແມ່ນກ່ຽວກັບຜູ້ຮັບໃຊ້. ຜູ້ເປັນນາຍໃນເລື່ອງນີ້ເບິ່ງຄືບໍ່ມີຄວາມເມດຕາແລະຮູ້ຄຸນຕໍ່ຜູ້ຮັບໃຊ້ຂອງຕົນປານໃດ? ສ່ວນຜູ້ຮັບໃຊ້ເຖິງວ່າເຂົາໄດ້ທຳທຸກສິ່ງຢ່າງທີ່ນາຍສັ່ງບອກ, ແຕ່ທ້າຍສຸດແລ້ວ, ກໍເປັນພຽງແຕ່ຄົນຮັບໃຊ້ທີ່ໄຮ້ປະໂຫຍດເທົ່ານັ້ນ. ພວກເຮົາຈະເຂົ້າໃຈວາຈາພຣະເຈົ້າວັນນີ້ຢ່າງໃດ? ເປັນຫຍັງຜູ້ຂຽນພຣະວໍລະສານຈຶ່ງນຳສະເໜີພວກເຮົາເລື່ອງນີ້ ?

ບໍ່ວ່າຈະເປັນຄວາມເຊື່ອຫລືວຽກການຮັບໃຊ້ພຣະເຈົ້າແລະເພື່ອນພີ່ນ້ອງ, ກໍລ້ວນແຕ່ແມ່ນພຣະຄຸນທີ່ມາຈາກພຣະເຈົ້າ. ແລະຈຸດໝາຍຂອງພຣະຄຸນນີ້ແມ່ນການໄດ້ຢູ່ຮ່ວມກັບພຣະເຈົ້າ ອັນແມ່ນຊີວິດນິລັນດອນນັ້ນເອງ. ດ້ວຍເຫດນີ້, ເພື່ອຈະຕອບຕໍ່ພຣະຄຸນທີ່ພຣະເຈົ້າປະທານໃຫ້ພວກເຮົາເມື່ອວັນພວກເຮົາຮັບສິນລ້າງບາບນັ້ນ, ພວກເຮົາຕ້ອງຮ່ວມມືກັບພຣະອົງດ້ວຍການທຳໃຫ້ພຣະຄຸນນັ້ນເຕີບໃຫຍ່ຂຶ້ນໃນຕົວພວກເຮົາສະເໝີ, ຜ່ານທາງຊີວິດຄວາມເຊື່ອແລະຄວາມຮັກຕໍ່ພຣະເຈົ້າແລະຕໍ່ຜູ້ອື່ນ. ເພາະຖ້າຄວາມເຊື່ອບໍ່ໄດ້ປະຕິບັດຜ່ານທາງຄວາມຮັກແລະຄວາມຊ່ວຍເຫລືອຜູ້ອື່ນແລ້ວ, ຄວາມເຊື່ອນັ້ນກໍແມ່ນຄວາມເຊື່ອທີ່ຕາຍ. ກົງກັນຂ້າມ, ຖ້າພວກເຮົານຳຄວາມເຊື່ອມາປະຕິບັດໃນຊີວິດຕົວຈິງຜ່ານທາງຄວາມຮັກແລະການຊ່ວຍເຫລືອຜູ້ອື່ນແລ້ວ, ຄວາມເຊື່ອຂອງພວກເຮົາກໍເປັນຄວາມເຊື່ອທີ່ມີຊີວິດ. ແລະໝາກຜົນຊຶ່ງພວກເຮົາຈະໄດ້ຮັບນັ້ນແມ່ນຊີວິດຢູ່ກັບພຣະເຈົ້າ, ຊີວິດນິລັນດອນນັ້ນເອງ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໂຜດຊ່ວຍລູກໃຫ້ຮັບຮູ້ເຖິງພຣະຄຸນທີ່ລູກໄດ້ຮັບຈາກພຣະອົງເມື່ອວັນຮັບສິນລ້າງບາບ, ອັນແມ່ນພຣະຄຸນແຫ່ງຄວາມເຊື່ອນັ້ນເອງ. ໂຜດຊ່ວຍລູກໃຫ້ຮູ້ຈັກພັດທະນາຄວາມເຊື່ອຂອງລູກຜ່ານທາງຊີວິດຄວາມຮັກຕໍ່ພຣະອົງແລະຕໍ່ເພື່ອນພີ່ນ້ອງຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ